ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1833/ອຄ

ນະຄອນຫຼວງວຽງຈັນ, ວັນທີ 03 OCT 2016

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມ ສົ່ງອອກ

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 552/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15 ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້ ແລະ ທຸລະກິດໄມ້.
- ອີງຕາມແຈ້ງການວ່າດ້ວຍລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ສະບັບເລກທີ 1356/ ຫສນຍ.ກລຂ, ລົງວັນທີ 9.9.2016.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ

**ມາດຕາ 1: ການຮັບຮອງ**

ເຫັນດີຮັບຮອງເອົາ ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ຕາມເອກະສານຊ້ອນທ້າຍ 01 ແລະ ເອກະສານຊ້ອນທ້າຍ 02 ຄັດຕິດມາພ້ອມນີ້.

**ມາດຕາ 2: ການຈັດຕັ້ງປະຕິບັດ**

ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ອອກຄຳແນະນຳ ກ່ຽວກັບ ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.

ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3: ຜົນບັງຄັບໃຊ້**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ບ ເຂັມມະນີ ພົນເສນາ

# ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ



# ສາລະບານ

ໜ້າ

**ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ** ..... 1

1. ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ ..... 1

2. ຜະລິດຕະພັນຖ່ານໄມ້ ..... 1

3. ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນ ສໍາລັບພາຍໃນ. ..... 1

4. ຜະລິດຕະພັນໄມ້ອັດ ..... 2

5. ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້ ..... 2

6. ຜະລິດຕະພັນໄມ້ປະກອບໃນອາຄານ ..... 3

7. ເຄື່ອງຫັດຖະກໍາ ທີ່ເຮັດດ້ວຍໄມ້ ..... 4

8. ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້ ..... 4

9. ຜະລິດຕະພັນ ທີ່ເຮັດດ້ວຍໄມ້ປ່ອງ ແລະ ຫວາຍ ..... 5

10. ໄມ້ຄໍ້າແບບ, ໄມ້ຂ້າວ, ໄມ້ຮົ້ວ (ໄມ້ກົມ), ໄມ້ເລື່ອຍເປັນແຜ່ນ (ໄມ້ປູກ) ..... 5

11. ຜະລິດຕະພັນເຫຍື່ອໄມ້ ..... 6

12. ໄມ້ເກດສະໜາ (ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ) ..... 6

**ຮູບພາບ ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ** ..... 7

1 - 44.01 ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ ..... 7

1.1- 4401.22.00 ຂີ້ເລື່ອຍອັດແທ່ງ ..... 7

1.2 - 4401.31.00 ຂີ້ເລື່ອຍອັດເມັດ ..... 7

2 - 44.02 – 4402.90.90 ຜະລິດຕະພັນຖ່ານຂາວ, ຖ່ານອັດແທ່ງຈາກຂີ້ເລື່ອຍ. ..... 7

3 - 44.09 – 4402.29.00 ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນ ສໍາລັບພາຍໃນ ..... 8

3.1 ຜະລິດຕະພັນໄມ້ປັກເກ້ ..... 8

3.1.1 ໄມ້ປັກເກ້ເສັ້ນດຽວ ..... 8

3.1.2 ໄມ້ປັກເກ້ເຊື່ອມຕໍ່ປະສານ ..... 9

3.1.3 ໄມ້ປັກເກ້ໂມເສດ ..... 9

3.2 ຜະລິດຕະພັນໄມ້ປູພື້ນ ..... 9

3.3 - ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ ..... 10

3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ ..... 11

4 - 44.10; 44.11; 44.12 ຜະລິດຕະພັນໄມ້ອັດ ........ 11
4.1 – 44.10; 44.11; 44.12 ໄມ້ອັດຈາກຂີ້ເລື່ອຍ, ຂີ້ກົບ ແລະ ໄມ້ສັບ ........ 11
4.2 & 4.3 - 44.11 – 4411.00.00 ໄມ້ອັດຈາກໄມ້ບົດ ແລະ ໄຍໄມ້ ........ 11
4.4 – 44.12 – 4412.99.00 ໄມ້ອັດຈາກໄມ້ປອກ (Veneer) ........ 12
4.5 - 44.12 - 4412.94.00 ໄມ້ອັດບ໊ອກບອດ ........ 12
4.6 – 44.12 – 4412.94.00 ໄມ້ອັດປະສານ, ໄມ້ອັດຕໍ່ປະສານ ........ 13
4.7 - 44.12 - 4412.99.00 ໄມ້ອັດປະສານສຳລັບໜ້າໂຕະ ........ 13
5 - 44.14 ເຄື່ອງໃຊ້ສ້ອຍທີ່ເຮັດດ້ວຍໄມ້ ........ 14
5.1 - 4414.00.00 ຂອບສຳລັບແຕ້ມຮູບ ,ຂອບຮູບ ,ຂອບແວ່ນ ........ 14
5.2 – 4415.00.00 ຫີບ, ກັບ, ລັງ, ຖັງ ແລະ ສິ່ງຫຸ້ມຫໍ່ຄ້າຍຄຽງ, ແກນມ້ວນສາຍກາບ, ພາເລດທີ່ເຮັດດ້ວຍໄມ້ ........ 14
5.2.1 – 4415.10.00 ຫີບ, ຫີບນ້ອຍ, ຫີບໂປ່ງ, ຖັງກົມ ........ 14
5.2.2 – 4415.20.00 ແຜ່ນຖາດ, ຖາດ-ຫີບ ແລະ ຖາດໃສ່ຂອງອື່ນໆ ທີ່ໃຊ້ສຳລັບຮອງ ແລະ ເຄື່ອນຍ້າຍສິນຄ້າ ........ 15
5.3 – 5.3.1 & 5.3.2 – 44.16 – 4416.00.10 & 4416.00.90 ອ່າງ, ຖັງເຮັດດ້ວຍໄມ້ ........ 15
5.4 – 5.4.1 - 44.17 - 4417.00.90 - 4417.00.10 ດ້າມເຄື່ອງມືທີ່ເຮັດດ້ວຍໄມ້ ........ 15
5.4.2 ຮູບຫຸ່ນເກີບບູດ, ກົ້ນເກີບ ........ 16
6 - 44.18 ຜະລິດຕະພັນໄມ້ປະກອບໃນອາຄານ ........ 17
6.1 - 418.10.00 ຊຸດປ່ອງຢ້ຽມ ........ 17
6.2 - 4418.20.00 ຊຸດປະຕູ ........ 17
6.2.3 ບານຕູ້ເຮືອນຄົວ ........ 18
6.4418 - 3.50. 00ແຜ່ນໄມ້ມຸງຫຼັງຄາ ........ 18
6.4 – 4418.50.00 ແຜ່ນໄມ້ຮົ້ວ ........ 18
6.5 - 4418.71.00 ແຜ່ນໄມ້ປະກອບແບບລາຍໂມເສດ ........ 19
6.6 – 4418.72.00 ຜະລິດຕະພັນໄມ້ຂອບອັດເປັນຊັ້ນ ........ 19
6.7 – 6.7.1- 6.7.2 - 4418.72.00 ຊຸດຂັ້ນໄດ ........ 19
7 - ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້ ........ 20
7.1 ຜະລິດຕະພັນໄມ້ທີ່ໃຊ້ເທິງໂຕະອາຫານ ........ 20
7.2 - ຊຽງ ........ 20
7.3 - 44.20 - 4420.10.00 - ຜະລິດຕະພັນເຄື່ອງຫັດຖະກຳໄມ້ ........ 21

7.4 - 44.21 - 4421.10.00 - ຜະລິດຕະພັນຂໍເກາະເສື້ອ ........ 21
7.5 – 4421.90.10 - ຜະລິດຕະພັນແກ່ນ, ຫຼອດ, ກະສວຍ, ຫຼອດດ້າຍຫຍິບຜ້າ ........ 21
7.6 & 7.7- 4421.90.20 & 4421.90.94 - ໄມ້ຂີດໄຟ, ໄມ້ຈີ້ມແຂ້ວ ........ 22
7.8 - 4421.90.99 - ລູກປັດສຳລັບນັກບວດ, ໄມ້ກ້ານສໍ ........ 22
7.9 - ເຄື່ອງດົນຕີທີ່ເຮັດດ້ວຍໄມ້ ........ 22
8 - 94.01 - ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້ ........ 23
8.1 - 9401.61.00 - ສະໂລງໄມ້, ສະໂລງໄມ້ຫຸ້ມເບາະທຸກຊະນິດສຳເລັດຮູບ. ........ 23
8.2 - 9401.61.00 - ຕັ່ງໄມ້, ຕັ່ງໄມ້ຫຸ້ມເບາະ ທຸກຊະນິດສຳເລັດຮູບ ........ 24
8.3 – 94.03 – 9403.60.10 - ໂຕະໄມ້ທຸກຊະນິດສຳເລັດຮູບ ........ 25
8.4 – 9403.60.10 - ຕູ້ໄມ້ທຸກຊະນິດສຳເລັດຮູບ ........ 26
8. 5- 9403.60.10 - ຕຽງ ໄມ້ທຸກຊະນິດສຳເລັດຮູບ ........ 27
8.6 – 9403.00.00 - ເຄື່ອງຕົບແຕ່ງອື່ນໆ ທີ່ເປັນເຟີນີເຈີ ດ້ວຍໄມ້ ........ 27
8.6.1 - 9403.30.00 - ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງການ ........ 27
8.6.2 - 9403.40.00 - ເຄື່ອງເຟີນີເຈີທີ່ໃຊ້ໃນເຮືອນຄົວ ........ 27
8.6.3 - 9403.50.00 - ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງນອນ ........ 28
9 - 94.03 - 9403.81.00 - ຜະລິດຕະພັນ ທີ່ເຮັດດ້ວຍໄມ້ໄຜ່ ແລະ ຫວາຍ ........ 28
9.1 - ຜະລິດຕະພັນໄມ້ໄຜ່ ........ 28
9.1.3 - ໄມ້ປ່ອງ ແລະ ຜະລິດຕະພັນໄມ້ປ່ອງ ........ 28
9.2 - ຜະລິດຕະພັນຫວາຍ ........ 29
10 - ໄມ້ປູກສຳລັບເຮັດໄມ້ຄ້ຳແບບ, ຮົ້ວ, ຂ້າວທີ່ເປັນລຳຕົ້ນ (ໄມ້ກົມ) ມີເສັ້ນຜ່າກາງນ້ອຍກ່ວາ ຫຼື ເທົ່າກັບ 12 ຊມ ລົງມາ. 29
11 - ຜະລິດຕະພັນເຫຍື້ອໄມ້ຈາກໄມ້ປູກ ........ 30
12 - ໄມ້ເກດສະໜາ (ບົດເປັນຝຸ່ນ ຫຼື ສັບເປັນປຽງນ້ອຍໆ) ........ 30

# ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ

| ລະຫັດເຄົ້າ Heading | ລະຫັດຍອຍ Sub-Heading | ລາຍການຜະລິດຕະພັນໄມ້ "Wooden products or Wooden finish-products" | | ຂະໜາດບໍ່ກາຍ (ຊມ) Maximum size (Cm) | | |
|---|---|---|---|---|---|---|
| | | ພາສາລາວ 'Lao' | ພາສາອັງກິດ 'English' | ໜາ Thick | ກ້ວາງ Wide | ຍາວ Length |
| 44.01 | | **1. ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ** | **1. Wooden Briquettes, Pellets** | | | |
| | 4401.22.00<br>4401.31.00 | 1.1 ຂີ້ເລື່ອຍອັດແທ່ງ<br>1.2 ຂີ້ເລື່ອຍອັດເມັດ | 1.1 Wooden briquettes<br>1.2 Wooden pellets | | | |

**ອະທິບາຍຄໍາສັບ ຫຼື ຄວາມໝາຍ:-** ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ ແມ່ນໄດ້ຈາກ ຂີ້ເລື່ອຍ, ໄມ້ເສດ ແລະ ສິ່ງແຕກຫັກຂອງໄມ້ມາຕິດລວມກັນດ້ວຍກາວອັດເປັນທ່ອນ, ກ້ອນ ແລະ ອື່ນໆ.

| | | | | | | |
|---|---|---|---|---|---|---|
| 44.02 | 4402.90.90 | **2. ຜະລິດຕະພັນຖ່ານໄມ້** | **2. Wooden Charcoal** | | | |
| | | 2.1 ຖ່ານຂາວ<br>2.2 ຖ່ານອັດແທ່ງຈາກຂີ້ເລື່ອຍ | 2.1 White Charcoal<br>2.2 Sawdust Charcoal | | | |

**ອະທິບາຍຄໍາສັບ ຫຼື ຄວາມໝາຍ:**

- **ຖ່ານຂາວ** ແມ່ນຜະລິດຕະພັນຖ່ານ ຈາກໄມ້ຕີ້ວທີ່ຂຸດຄົ້ນຈາກສວນປູກ ຫຼື ເຂດປ່າຟື້ນຟູຈາກທໍາມະຊາດ, ອະນຸຍາດໃຫ້ສົ່ງອອກຕາມລະບຽບການທີ່ກ່ຽວຂ້ອງ ຊຶ່ງຕິດພັນກັບການສົ່ງເສີມໃຫ້ປະຊາຊົນປູກໄມ້ຕີ້ວ ເພື່ອເປັນວັດຖຸດິບ ສະໜອງໃຫ້ແກ່ການເຜົາຖ່ານ.
- **ຖ່ານອັດແທ່ງຈາກຂີ້ເລື່ອຍ** ແມ່ນຜະລິດຕະພັນຖ່ານ ທີ່ນໍາເອົາ ຂີ້ເລື່ອຍອັດແທ່ງ, ອັດເມັດ ມາເຜົາເປັນຖ່ານ.

| | | | | | | |
|---|---|---|---|---|---|---|
| 44.09 | 4409.29.00 | **3. ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນສໍາລັບພາຍໃນ.** | **3. Wooden Parquet, Interior flooring.** | | | |
| | | 3.1. ຜະລິດຕະພັນໄມ້ປັກເກ້ | 3.1 Parquet | | | |
| | | 3.1.1 ໄມ້ປັກເກ້ເສັ້ນດຽວ | 3.1.1 Solid parquet | ≤ 2.5 | ≤ 20 | ≤ 100 |
| | | 3.1.2 ໄມ້ປັກເກ້ເຊື່ອມຕໍ່ປະສານ | 3.1.2 FJL Parquet | ≤ 2.5 | ≤ 20 | ≤ 100 |
| | | 3.1.3 ໄມ້ປັກເກ້ໂມເສດ | 3.1.3 Mosaic Parquet | ≤ 2.5 | ≤ 50 | ≤ 50 |
| | | 3.2 ຜະລິດຕະພັນໄມ້ປູພື້ນ | 3.2 Flooring | | | |
| | | 3.2.1 ໄມ້ປູພື້ນສິ້ນດຽວ | 3.2.1 OPC Flooring | ≤ 2.5 | ≤ 20 | ≤ 400 |
| | | 3.2.2 ໄມ້ປູພື້ນເຊື່ອມຕໍ່ສິ້ນດຽວ | 3.2.2 UNI Flooring | ≤ 2.5 | ≤ 20 | ≤ 400 |
| | | 3.2.3 ໄມ້ປູພື້ນຕໍ່ເຊື່ອມຕໍ່ປະສານ | 3.2.3 FJL Flooring | ≤ 2.5 | ≤ 20 | ≤ 400 |
| | | 3.2.4 ໄມ້ປູພື້ນອັດເປັນຊັ້ນ | 3.2.4 Engineered flooring | ≤ 2.5 | ≤ 20 | ≤ 400 |
| | | 3.2.5 ໄມ້ແຜ່ນພື້ນເດັກກິງ | 3.2.5 Decking tile | ≤ 3 | ≤50 | ≤ 50 |
| | | 3.3 ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ | 3.3 Wall and ceiling Panel | | | |
| | | 3.3.1 ໄມ້ເພດານແບບຮ່ອງຕົວວີ (V) | 3.3.1 V Ceiling Panel | ≤1,5 | ≤ 20 | ≤ 400 |
| | | 3.3.2 ໄມ້ເພດານແບບຕໍ່ເຊື່ອມປະສານ | 3.3.2 FJL Ceiling Panel | ≤ 1,5 | ≤ 20 | ≤ 400 |
| | | 3.3.3 ໄມ້ແອ້ມຝາ ແລະເພດານແບບອັດເປັນຊັ້ນ | 3.3.3 Engineering Panel | ≤ 1.5 | ≤ 20 | ≤ 400 |
| | | 3.3.4 ໄມ້ແອ້ມຝາແບບມູນ | 3.3.4. Logged Panel | ≤ 3 | ≤ 20 | ≤ 400 |
| | | 3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ | 3.4 Finger Joint Wood | ≤ 5 | ≤ 10 | ≤ 600 |

**ອະທິບາຍຄຳສັບ ຫຼື ຄວາມໝາຍ:**

- **ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນ** ແມ່ນຜະລິດຕະພັນໄມ້ທີ່ມີຂະໜາດອັນສະເພາະ ທີ່ໄດ້ກຳນົດໃນຕາຕະລາງນີ້ ໂດຍຜ່ານຂະບວນການປຸງແຕ່ງຈາກການອົບ, ຕັດຂະໜາດ, ກົບ, ຂັດ, ແລ່ນຫລີ້ມ ແລະ ຮ່ອງ ຫຼື ບໍ່ແລ່ນຮ່ອງ (ແຕ່ກົບໜ້າລຽບສີ່ດ້ານ), ລົງສີ ຫຼື ບໍ່ລົງສີ.
- **ຜະລິດຕະພັນໄມ້ປູພື້ນເຊື່ອມຕໍ່ປະສານ** ແມ່ນການນຳໃຊ້ໄມ້ສັ້ນ, ໄມ້ນ້ອຍມາເຊື່ອມຕໍ່ເຂົ້າກັນດ້ວຍກາວ ເປັນເສັ້ນຍາວ ຊຶ່ງມີຂະບວນການປຸງແຕ່ງເຊັ່ນ: ອົບ, ການຕັດຂະໜາດ, ການປາດເດືອຍ, ຕິດກາວເຊື່ອມຕໍ່ເຂົ້າກັນເປັນເສັ້ນດຽວ ແລະ ອັດເປັນແຜ່ນຕາມຂະໜາດທີ່ໄດ້ກຳນົດໄວ້ແລ້ວ, ການກົບ, ແລ່ນ ຫລີ້ມ ແລະ ຮ່ອງ, ຂັດ, ລົງສີ ຫຼື ບໍ່ລົງສີ.
- **ໄມ້ປູພື້ນແບບອັດເປັນຊັ້ນ** ແມ່ນການນຳເອົາແຜ່ນໄມ້ ມາຕິດເຂົ້າກັນດ້ວຍກາວ ເປັນ 2 ຊັ້ນ ຫຼື 3 ຊັ້ນ ໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ, ສ່ວນໜ້າດ້ານເທິງແມ່ນໃຊ້ໄມ້ທີ່ມີຄຸນນະພາບດີ ແລະ ສວຍງາມຕິດໃສ່ (ໄມ້ປົກໜ້າ ຄວາມໜາບໍ່ເກີນ 3 ມມ) ຊຶ່ງຜ່ານຂະບວນການປຸງແຕ່ງເຊັ່ນ: ການອົບ, ການຊອຍໄມ້ຕາມຂະໜາດ, ຕັດຂະໜາດ, ການປາດເດືອຍ ແລະ ອັດເປັນແຜ່ນຕາມຂະໜາດທີ່ໄດ້ກຳນົດໄວ້, ການກົບ, ແລ່ນ ຫລີ້ມ ແລະ ຮ່ອງ, ຂັດ, ລົງສີ ຫຼື ບໍ່ລົງສີ.
- **ໄມ້ແອ້ມຝາ ແລະ ເພດານ** ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງເຊັ່ນ: ການອົບ, ຊອຍ ແລະ ຕັດຕາມຂະໜາດ, ກົບ, ແລ່ນຫລີ້ມ ແລະ ຮ່ອງ ຫຼື ລົບຫຼ່ຽມ ໃຫ້ເປັນຮູບຊົງ, ຂັດ, ລົງສີ ຫຼື ບໍ່ລົງສີ.
- **ຜະລິດຕະພັນໄມ້ຕໍ່ເປັນເສັ້ນ** ແມ່ນການນຳໃຊ້ໄມ້ສັ້ນ, ໄມ້ນ້ອຍ ມາອັດເຊື່ອມຕໍ່ເຂົ້າກັນດ້ວຍກາວເປັນເສັ້ນຍາວ ຊຶ່ງມີຂະບວນການປຸງແຕ່ງເຊັ່ນ: ການອົບ, ການຕັດຂະໜາດ, ການປາດເດືອຍ, ຕິດກາວເຊື່ອມຕໍ່ເຂົ້າກັນເປັນເສັ້ນດຽວ, ການກົບສີ່ດ້ານ, ຂັດ ແລະ ຫຸ້ມຫໍ່ຢ່າງດີ.

| | | | | | | |
|---|---|---|---|---|---|---|
| | | 4. ຜະລິດຕະພັນໄມ້ອັດ | 4. Plywood | | | |
| 44.10 | 4410.11.00 | 4.1 ໄມ້ອັດຈາກ ຂີ້ເລື່ອຍ, ຂີ້ກົບ | 4.1 Particle Board | ≤ 5 | ≤ 122 | ≤ 244 |
| 44.11 | 4411.00.00 | 4.2 ໄມ້ອັດຈາກເສດໄມ້ບົດ<br>4.3 ໄມ້ອັດຈາກໄຍໄມ້ | 4.2 MDF Board<br>4.3 Fibreboard | ≤ 5 | ≤ 122 | ≤ 244 |
| 44.12 | 4412.99.00<br>4412.94.00<br>4412.94.00<br><br>4412.99.00 | 4.4 ໄມ້ອັດຈາກໄມ້ປອກ<br>4.5 ໄມ້ອັດບ໊ອກບອດ<br>4.6 ໄມ້ອັດປະສານ, ໄມ້ອັດເຊື່ອມຕໍ່ປະສານ<br>4.7 ໄມ້ອັດປະສານສຳລັບໜ້າໂຕະ | 4.4 Plywood from veneer<br>4.5 Blockboard<br>4.6 Laminated Board, FJL Board<br>4.7 Laminated Board for Table top | ≤ 5<br>≤ 5<br>≤ 5<br><br>≤ 5 | ≤ 122<br>≤ 122<br>≤ 122<br><br>≤ 100 | ≤ 244<br>≤ 244<br>≤ 244<br><br>≤ 600 |

**ອະທິບາຍຄຳສັບ ຫຼື ຄວາມໝາຍ:**

- **ຜະລິດຕະພັນໄມ້ອັດຈາກ ຂີ້ເລື່ອຍ, ຂີ້ກົບ** ແມ່ນຜະລິດຕະພັນໄມ້ຈາກການນຳເອົາຂີ້ເລື່ອຍ ຫຼື ຂີ້ກົບນຳມາປະສົມໃສ່ກາວ ແລ້ວນຳເຂົ້າແມ່ແບບອັດດ້ວຍເຄື່ອງຈັກອັດແໜ້ນ, ອົບດ້ວຍຄວາມຮ້ອນ ເພື່ອໃຫ້ຂີ້ເລື່ອຍ ແລະ ຂີ້ກົບເຊື່ອມຈັບຕົວເຂົ້າກັນໃຫ້ແຂງຕົວເປັນແຜ່ນເພື່ອນຳໃຊ້ງານຕໍ່ໄປ.
- **ຜະລິດຕະພັນໄມ້ອັດຈາກເສດໄມ້ບົດ** ແມ່ນຜະລິດຕະພັນໄມ້ນຳເອົາໄມ້ເນື້ອອ່ອນທີ່ມີໜ້າຕາງ 14 ຊມ ລົງມາ ມາບົດ, ອົບນຳມາປະສົມໃສ່ກາວ ແລ້ວນຳເຂົ້າແມ່ແບບອັດດ້ວຍເຄື່ອງຈັກອັດແໜ້ນ, ອົບດ້ວຍຄວາມຮ້ອນເພື່ອໃຫ້ເຊື່ອມຈັບຕົວເຂົ້າກັນໃຫ້ແຂງຕົວເປັນແຜ່ນເພື່ອນຳໃຊ້ງານຕໍ່ໄປ.
- **ຜະລິດຕະພັນໄມ້ອັດຈາກໄມ້ປອກ** ແມ່ນຜະລິດຕະພັນໄມ້ທີ່ນຳເອົາໄມ້ປອກມາຕິດເຂົ້າກັນ ແລ້ວອັດດ້ວຍເຄື່ອງຈັກໃຫ້ເປັນແຜ່ນດຽວ. ອາດຈະນຳໃຊ້ໄມ້ປອກ ຕິດແຕ່ດ້ານໜ້າ ຫຼື ດ້ານຫຼັງ, ສ່ວນໃຈກາງອາດນຳໃຊ້ຂີ້ເລື່ອຍ ຫຼື ອື່ນໆ.
- **ໄມ້ອັດປະສານ, ໄມ້ອັດເຊື່ອມຕໍ່ປະສານ, ໄມ້ອັດປະສານສຳລັບໜ້າໂຕະ** ແມ່ນຜະລິດຕະພັນໄມ້ ທີ່ນຳເອົາໄມ້ເປັນເສັ້ນ (ໜ້າກ້ວາງບໍ່ເກີນ 15 ຊມ) ຫຼື ນຳເອົາໄມ້ສັ້ນ, ໄມ້ນ້ອຍມາເຊື່ອມຕໍ່ເຂົ້າກັນອັດໜີບດ້ວຍກາວ ເປັນເສັ້ນຍາວ ແລະ ອັດໜີບເຊື່ອມຕໍ່ເຂົ້າກັນເປັນແຜ່ນ ໂດຍຜ່ານຂະບວນການປຸງແຕ່ງເຊັ່ນ: ການອົບ, ຊອຍ ແລະ ຕັດຂະໜາດ, ອັດນີບດ້ວຍເຄື່ອງຈັກອັດແຮງ ແລະ ຂັດກະດາດຊາຍ.

| | | | | | | |
|---|---|---|---|---|---|---|
| | | 5. ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້ | 6. Wooden handle products | | | |
| 44.14 | 4414.00.00 | 5.1 ຂອບສຳລັບແຕ້ມຮູບ, ຂອບຮູບ, ຂອບແວ່ນ | 5.1 Wooden frames for paintings, photographs and mirrors | | | |
| 44.15 | 4415.00.00 | 5.2 ຫີບ, ກັບ, ລັງ, ຖັງ ແລະ ສິ່ງຫຸ້ມຫໍ່ຄ້າຍຄຽງ, ແກນມ້ວນສາຍກາບ, ພາເລດທີ່ເຮັດດ້ວຍໄມ້ | 5.2 Packing cases, boxes, creates, drums, and similar packing, wood cable drums, wood pallets | | | |

| | | | | | | |
|---|---|---|---|---|---|---|
| | 4415.10.00 | 5.2.1 ຫີບ, ຫີບນ້ອຍ, ຫີບໂປ່ງ, ຖັງກົມ. (ສໍາລັບບັນຈຸສິ່ງຂອງ) | 5.2.1 Cases, boxes, crates, cable | | | |
| | 4415.20.00 | 5.2.2 ແຜ່ນຖາດ, ຖາດ-ຫີບ ແລະ ຖາດ ໃສ່ຂອງອື່ນໆ ທີ່ໃຊ້ສໍາລັບຮອງ ແລະ ເຄື່ອນຍ້າຍສິນຄ້າ | 5.2.2 Pallets, box pallets and other load boards | | | |
| 44.16 | 4416.00.10<br>4416.00.90 | 5.3 ອ່າງ, ຖັງເຮັດດ້ວຍໄມ້<br>5.3.1 ຖັງ<br>5.3.2 ອ່າງ | 5.3 Wooden Barrels, Staves<br>5.3.1 Staves<br>5.3.2 Barrels | | | |
| 44.17 | 4417.00.90<br>4417.00.10 | 5.4 ດ້າມເຄື່ອງມືທີ່ເຮັດດ້ວຍໄມ້<br>5.4.1 ດ້າມຟອຍ ຫຼື ແປງ ແລະ ອື່ນໆ ສໍາລັບຮັບໃຊ້ການຜະລິດ (ເສັ້ນຜ່າໃຈກາງບໍ່ເກີນ 4 ຊມ, ນໍາ ໃຊ້ໄມ້ຖຸ້ມຄອງ 1.2.3).<br>5.4.2 ຮູບຫຸ່ນເກີບບູດ, ສົ້ນເກີບ | 5.4 Tools, tool handles of wood<br>5.4.1 Tool handles, broom or brush bodies<br>5.4.2 Handles, boot or shoe lasts of wood | | | |
| | | **6. ຜະລິດຕະພັນໄມ້ປະກອບໃນອາຄານ** | **6. Builders' joinery and carpentry of wood** | | | |
| 44.18 | 4418.10.00 | 6.1 ຊຸດປ່ອງຢ້ຽມ | 6.1 Windows | | | |
| | | 6.1.1 ວົງກົບປ່ອງຢ້ຽມ ສໍາເລັດຮູບ (ຖອດຊິ້ນສ່ວນ ຫຼື ບໍ່ຖອດ) | 6.1.1 Window frames (knock-down) | ≤ 5 | ≤ 10 | ≤ 250 |
| | | 6.1.2 ບານປ່ອງຢ້ຽມ ສໍາເລັດຮູບ | 6.1.2 Window | ≤ 3.5 | ≤ 100 | ≤ 200 |
| | 4418.20.00 | 6.2 ຊຸດປະຕູ | 6.2 Doors | | | |
| | | 6.2.1 ວົງກົບປະຕູສໍາເລັດຮູບ (ຖອດຊິ້ນສ່ວນ ຫຼື ບໍ່ຖອດ) | 6.2.1 Door frames (knock-down) | ≤ 5 | ≤ 10 | ≤ 250 |
| | | 6.2.2 ບານປະຕູ ສໍາເລັດຮູບ | 6.2.2 Door | ≤ 4.5 | ≤ 100 | ≤ 250 |
| | | 6.2.3 ບານຕູ້ເຮືອນຄົວ | 6.2.3 Kitchen doors | ≤ 3 | ≤ 50 | ≤ 80 |
| | 4418.50.00 | 6.3 ແຜ່ນໄມ້ມຸງຫຼັງຄາ | 6.3 Wooden shingles | ≤ 2.5 | ≤ 20 | ≤ 50 |
| | 4418.50.00 | 6.4 ແຜ່ນໄມ້ຮົ້ວ | 6.4 Wooden fences | ≤ 2.5 | ≤ 15 | ≤ 180 |
| | 4418.71.00 | 6.5 ແຜ່ນໄມ້ປະກອບແບບລາຍໂມເສດ | 6.5 Assembled flooring panel for mosaic floor | ≤ 3 | ≤ 150 | ≤ 150 |
| | 4418.72.00 | 6.6 ຜະລິດຕະພັນໄມ້ຂອບອັດເປັນຊັ້ນ | 6.6 Multilayer Scantlings | ≤ 9 | ≤ 9 | ≤ 150 |
| | 4418.72.00 | 6.7 ຊຸດຂັ້ນໄດ | 6.7 Staircases | | | |
| | | 6.7.1 ແປ້ນຂັ້ນໄດຕົວນອນ | 6.7.1 Horizontal stair board | ≤ 3.5 | ≤ 30 | ≤ 150 |
| | | 6.7.2 ແປ້ນຂັ້ນໄດຕົວຕັ້ງ | 6.7.2 Vertical stair board | ≤ 2.2 | ≤ 22 | ≤ 150 |

**ອະທິບາຍຄໍາສັບ ຫຼື ຄວາມໝາຍ:**

- **ໄມ້ວົງກົບປະຕູ ແລະ ປ່ອງຢ້ຽມ ສໍາເລັດຮູບ** ແມ່ນຜະລິດຕະພັນໄມ້ ທີ່ເຮັດດ້ວຍໄມ້ເນື້ອແຂງ ແບບເສັ້ນດຽວ ຫຼື ອັດປະສານ ຊຶ່ງມີຂະໜາດ ຄວາມໜາບໍ່ເກີນ 5 ຊມ, ຄວາມກ້ວາງ ບໍ່ເກີນ 10 ຊມ, ຄວາມຍາວ ຕາມຂະໜາດຂອງປະຕູ ແລະ ປ່ອງຢ້ຽມ ໂດຍຜ່ານຂະບວນການປຸງແຕ່ງ

ເຊັ່ນ: ການອົບ, ການກົບ, ການເຊາະຮ່ອງບັງໃບ, ຕັດມຸມສາກທີ່ວົງກົບ ຕົວຜູ້ ແລະ ຕົວແມ່ ທີ່ສາມາດປະກອບເປັນຊຸດ ຫຼື ບໍ່ປະກອບເຂົ້າກັນເພື່ອສະດວກໃນການຂົນສົ່ງ.

- **ໄມ້ມຸງຫຼັງຄາ ແລະ ໄມ້ຮົ້ວ** ແມ່ນຜະລິດຕະພັນໄມ້ ໂດຍຜ່ານຂະບວນການປຸງແຕ່ງເຊັ່ນ: ການອົບ, ຕັດຂະໜາດ, ກົບ, ການແລ່ນໂລເຕ ເພື່ອໃຫ້ເປັນຮູບທີ່ຕ້ອງການ, ລົບຫຼ່ຽມ ຫຼື ແລ່ນຮ່ອງ, ລົງສີ ຫຼື ບໍ່ລົງສີ ແລະ ຕ້ອງນຳໃຊ້ສະເພາະປະເພດໄມ້ຄຸ້ມຄອງ 1, 2, 3.
- **ຜະລິດຕະພັນໄມ້ຂອບອັດເປັນຊັ້ນ** ແມ່ນການນຳເອົາແຜ່ນໄມ້ ມາຕິດເຂົ້າກັນດ້ວຍກາວ ເປັນ 3 ຊັ້ນ ໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ ຊຶ່ງຜ່ານຂະບວນການປຸງແຕ່ງເຊັ່ນ: ການອົບ, ການຊອຍ ແລະ ຕັດໄມ້ຕາມຂະໜາດ, ກົບລະອຽດ ແລະ ອັດເປັນຊັ້ນ ຕາມຂະໜາດທີ່ໄດ້ກຳນົດໄວ້, ກົບສີ່ດ້ານ, ຂັດ, ລົງສີ ຫຼື ບໍ່ລົງສີ ແລະ ຕ້ອງນຳໃຊ້ສະເພາະປະເພດໄມ້ຄຸ້ມຄອງ 1, 2, 3.
- **ແປ້ນຂັ້ນໄດແນວນອນ ແລະ ແນວຕັ້ງ** ແມ່ນຕ້ອງໄດ້ຜ່ານຂະບວນການປຸງແຕ່ງເຊັ່ນ: ການອົບ, ກົບໃສ , ລົບຫຼ່ຽມ, ຕັດຂະໜາດ, ຂັດລຽບ ມີທັງແບບເປັນໄມ້ແຜ່ນດຽວ ຫຼື ອັດເຊື່ອມຕໍ່ປະສານ ຕາມຂະໜາດທີ່ໄດ້ກຳນົດໄວ້ ໃນຕາຕະລາງນີ້.

| | | | | | | |
|---|---|---|---|---|---|---|
| | | **7. ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້** | **7. Other article of wood** | | | |
| 44.19 | 4419.00.00 | 7.1 ຜະລິດຕະພັນໄມ້ທີ່ໃຊ້ເທິງໂຕະອາຫານ ແລະ ເຮືອນຄົວເຊັ່ນ: ຖ້ວຍ, ຊາມ, ຖາດ, ໂອ່ງ, ຈານ, ໄມ້ກະດ້າມ, ບ່ວງ, ຊ້ອມ, ດ້າມມີດ.<br>7.2 ຂຽງ<br>7.2.1 ຂຽງສີ່ຫຼ່ຽມ<br>7.2.2 ຂຽງໜ້າມົນ (ໜ້າຕ້າງ ≤ 30 ຊມ, ຄວາມໜາ ≤ 5 ຊມ) | 7.1 Tableware and kitchenware of wood<br>7.2 Cutting Boards<br>7.2.1 Square cutting boards<br>7.2.2 Round cutting boards | ≤ 5 | ≤ 30 | ≤ 50 |
| 44.20 | 4420.10.00 | 7.3 ຜະລິດຕະພັນເຄື່ອງຫັດຖະກຳໄມ້ ແລະ ເຄື່ອງໄມ້ແກະສະຫຼັກ, ແຜ່ນໄມ້ແກະສະຫຼັກ, ແຜ່ນລາຍປາດສະລຸ | 7.3 Wooden handicrafts and carving products, carving boards | 2.5 | 30 | 100 |
| 44.21 | 4421.10.00<br>4421.90.10<br><br>4421.90.20<br>4421.90.94<br>4421.90.99 | 7.4 ຜະລິດຕະພັນຂໍເກາະເສື້ອ<br>7.5 ຜະລິດຕະພັນແກນ, ຫຼອດ, ກະສວຍ, ຫຼອດດ້າຍທຍິບຜ້າ<br>7.6 ໄມ້ຂີດໄຟ<br>7.7 ໄມ້ຈີ້ມແຂ້ວ<br>7.8 ລູກປັດສຳລັບນັກບວດ, ໄມ້ກ້ານສໍ<br>7.9 ເຄື່ອງດົນຕີທີ່ເຮັດດ້ວຍໄມ້ | 7.4 Wooden clothes hangers<br>7.5 Cops and bobbins, sewing thread reels<br>7.6 Match splints<br>7.7 Toothpicks<br>7.8 Prayer beads, Pencils<br>7.9 Musical instruments of wood | | | |

**ອະທິບາຍຄຳສັບ ຫຼື ຄວາມໝາຍ:**

- ສຳລັບ ຜະລິດຕະພັນ ຂຽງ ແມ່ນສາມາດສົ່ງອອກໄດ້ສະເພາະຕາມຮູບແບບ ແລະ ຂະໜາດທີ່ໄດ້ກຳນົດໃນ (ຂໍ້ 7.2.1 ແລະ 7.2.2) ແລະ ນຳໃຊ້ ໄມ້ຄຸ້ມ ຄອງ1, 2, 3 ນີ້ເທົ່ານັ້ນ.
- ຜະລິດຕະພັນໄມ້ກ້ານສໍແມ່ນຜະລິດຕະພັນທີ່ມີຂະໜາດນ້ອຍ ຄວາມໜາ ≤ 1 ຊັງຕີແມັດ, ຄວາມກ້ວາງ ≤ 8 ຊັງຕີແມັດ ແລະ ຄວາມຍາວ ≤ 20 ຊັງຕີແມັດ, ໄມ້ກ້ານສໍມີສອງຮູບແບບຄື: 1). ຮູບແບບຕັດຂະໜາດສີ່ຫຼ່ຽມຍາວ.2). ຮູບແບບຕັດສີ່ຫຼ່ຽມຍາວ ແລະ ແລ່ນຮອງສຳລັບໃສ່ໄສ້ສໍ, (ນຳໃຊ້ໄມ້ເນື້ອອ່ອນ).

| | | | | | | |
|---|---|---|---|---|---|---|
| | | **8. ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້** | **8. Wooden Furniture** | | | |
| 94.01 | 9401.61.00<br><br>9401.61.00 | 8.1 ສະໂລງໄມ້, ສະໂລງໄມ້ຫຸ້ມເບາະທຸກຊະນິດສຳເລັດຮູບ.<br>8.2 ຕັ່ງໄມ້, ຕັ່ງໄມ້ຫຸ້ມເບາະທຸກຊະນິດສຳເລັດຮູບ ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ | 8.1 Wooden Sofa<br>8.2 Wooden Chairs (Fixed or Knock-down) | | | |

| | | | | | | |
|---|---|---|---|---|---|---|
| 94.03 | 9403.60.10 | 8.3 ໂຕະໄມ້ທຸກຊະນິດສຳເລັດຮູບ ສາມາດ ແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ | 8.3 Wooden Tables (Fixed or Knock-down) | | | |
| | 9403.60.10 | 8.4 ຕູ້ໄມ້ທຸກຊະນິດສຳເລັດຮູບ ສາມາດ ແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ | 8.4 Wooden Cabinets (Fixed or Knock-down) | | | |
| | 9403.60.10 | 8.5 ຕຽງ ໄມ້ທຸກຊະນິດສຳເລັດຮູບສາມາດ ແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ | 8.5 Wooden Bed (Fixed or Knock-down) | | | |
| | 9403.00.00 | 8.6 ເຄື່ອງຕົບແຕ່ງອື່ນໆ ທີ່ເປັນເຟີນິເຈີທີ່ເຮັດດ້ວຍໄມ້ | 8.6 Decorative and furniture of wood | | | |
| | 9403.30.00 | 8.6.1 ເຄື່ອງເຟີນິເຈີທີ່ໃຊ້ໃນຫ້ອງການ | 8.6.1 Furniture of a kind used in office | | | |
| | 9403.40.00 | 8.6.2 ເຄື່ອງເຟີນິເຈີທີ່ໃຊ້ໃນເຮືອນຄົວ | 8.6.2 Furniture of a kind used in kitchen | | | |
| | 9403.50.00 | 8.6.3 ເຄື່ອງເຟີນິເຈີທີ່ໃຊ້ໃນຫ້ອງນອນ | 8.6.3 Furniture of a kind used in bedroom | | | |
| **ອະທິບາຍຄຳສັບ ຫຼື ຄວາມໝາຍ:** - ເຟີນິເຈີຈາກໄມ້ ແມ່ນຜະລິດຕະພັນໄມ້ສຳເລັດຮູບ ທີ່ສາມາດແຍກ ຫຼື ປະກອບເຂົ້າກັນໄດ້ທັນທີ (knock-down), ຜະລິດຕະພັນດັ່ງກ່າວ ສາມາດສົ່ງອອກຊິ້ນສ່ວນທີ່ຄົບຊຸດ ແລະ ມີການຫຸ້ມຫໍ່ເປັນຊຸດ ຫຼື ເປັນໜ່ວຍຕາມຄວາມຕ້ອງການຂອງຕະຫຼາດ, ແຕ່ຕ້ອງຜ່ານຂະບວນການປຸງແຕ່ງຕາມຮູບແບບຂອງແຕ່ລະຜະລິດຕະພັນ ເຊັ່ນ: ໂຕະ, ຕັ່ງ, ຕູ້, ຕຽງ ແລະ ອື່ນໆ. (ບໍ່ອະນຸຍາດໃຫ້ສົ່ງອອກເປັນຊິ້ນສ່ວນຊະນິດດຽວ ເຊັ່ນ: ຂາໂຕະຢ່າງດຽວ, ຂາຕັ່ງຢ່າງດຽວ). | | | | | | |
| 94.03 | 9403.81.00 | **9. ຜະລິດຕະພັນ ທີ່ເຮັດດ້ວຍໄມ້ປ່ອງ ແລະ ຫວາຍ** | **9. Bamboo and Rattan Products** | | | |
| | | 9.1 ຜະລິດຕະພັນ ຈາກໄມ້ປ່ອງ.<br>9.1.1 ເຄື່ອງເຟີນິເຈີ ແລະ ເຄື່ອງໃຊ້ສອຍ ທີ່ເຮັດດ້ວຍໄມ້ປ່ອງ.<br>9.1.2 ເຄື່ອງຈັກສານທີ່ເຮັດດ້ວຍໄມ້ປ່ອງ<br>9.1.3 ຜະລິດຕະພັນໄມ້ປ່ອງ. | 9.1 Bamboo products<br>9.1.1 Furniture and accessories made from bamboo<br>9.1.2 Bamboo Plaiting Products<br>9.1.3 Bamboo Products | | | |
| | | 9.2 ຜະລິດຕະພັນທີ່ເຮັດດ້ວຍຫວາຍ<br>9.2.1 ເຄື່ອງເຟີນິເຈີທີ່ເຮັດດ້ວຍຫວາຍ<br>9.2.2 ເຄື່ອງຈັກສານທີ່ເຮັດດ້ວຍຫວາຍ | 9.2 Rattan products<br>9.2.1 Rattan furniture<br>9.2.2 Rattan Plaiting products | | | |
| **ອະທິບາຍຄຳສັບ ຫຼື ຄວາມໝາຍ:**<br>- ຜະລິດຕະພັນໄມ້ປ່ອງ ແມ່ນຜະລິດຕະພັນທີ່ຜ່ານຂະບວນການປຸງແຕ່ງຂັ້ນຕົ້ນ ຫຼື ສຳເລັດຮູບເຊັ່ນ: ການຜ່າເປັນຕິ້ວ, ເປັນປ່ຽງ, ການເຫຼົາເປັນຮູບຊົງກົມ, ການອັດເຊື່ອມຕໍ່ປະສານ ແລະ ອື່ນໆ. | | | | | | |
| 44.04 | 4404.10.00 | **10. ໄມ້ຄ້ຳແບບ, ໄມ້ຂ້າວ, ໄມ້ຮົ້ວ (ໄມ້ກົມ), ໄມ້ເລື່ອຍເປັນແຜ່ນ (ໄມ້ປູກ)** | **10. Split poles; piles, pickets, stakes of wood and Sawn wood.** | | | |
| | | 10.1 ໄມ້ຄ້ຳແບບ, ໄມ້ຂ້າວ, ໄມ້ຮົ້ວ | 10.1 Split poles; piles, pickets, stakes of wood | | | |
| | | 10.2 ໄມ້ເລື່ອຍເປັນແຜ່ນ | 10.2 Sawn wood | ≤ 5 | ≤ 15 | ≤ 200 |

<table>
<tr><td colspan="7">ອະທິບາຍຄໍາສັບ ຫຼື ຄວາມໝາຍ:<br>- ໄມ້ປູກສໍາລັບເຮັດໄມ້ຄໍ້າແບບ, ໄມ້ຮົ້ວ ແລະ ໄມ້ຂ້າວ ທີ່ເປັນລໍາຕົ້ນ (ໄມ້ກົມ) ຕ້ອງແມ່ນຜະລິດຕະພັນໄມ້ຈາກສວນປູກ (ໄມ້ວິກ, ໄມ້ກະຖິ່ນນາລົງ ແລະ ກະຖິ່ນເທພາ), ມີເສັ້ນຜ່າກາງນ້ອຍກ່ວາ ຫຼື ເທົ່າກັບ 12 ຊັງຕີແມັດ ລົງມາ (Diameter “D” ≤ 12 Cm).<br>- ໄມ້ປູກທີ່ເລື່ອຍເປັນແຜ່ນ ຕ້ອງແມ່ນຜະລິດຕະພັນໄມ້ຈາກສວນປູກ (ໄມ້ວິກ, ໄມ້ກະຖິ່ນນາລົງ ແລະ ກະຖິ່ນເທພາ) ໂດຍຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍເປັນແຜ່ນ ແລະ ຕ້ອງແມ່ນໄມ້ ທີ່ໄດ້ຮັບການຂຶ້ນທະບຽນສວນປູກ.</td></tr>
<tr><td>44.05</td><td>4405.00.10</td><td>11. ຜະລິດຕະພັນເຫຍື່ອໄມ້</td><td>11. Wood wool, wood flour</td><td></td><td></td><td></td></tr>
<tr><td colspan="7">ອະທິບາຍຄໍາສັບ ຫຼື ຄວາມໝາຍ: - ຜະລິດຕະພັນເຫຍືອໄມ້ແມ່ນຜະລິດຕະພັນໄມ້ຈາກສວນປູກ (ໄມ້ວິກ, ໄມ້ກະຖິນນາລົງ ແລະ ກະຖິນເທພາ) ທີ່ໄດ້ຜ່ານຂະບວນການປຸງແຕ່ງຢູ່ໃນໂຮງງານ ເຊັ່ນ: ຕັດ, ບົດ, ຕົ້ມ, ສະກັດ, ກັ່ນ ຈົນໄດ້ເຫຍື້ອໄມ້ລະອຽດ (Cellulose fiber powder ຫຼື wood fiber devised from wood pulp).</td></tr>
<tr><td>44.04</td><td>4404.20.10</td><td>12. ໄມ້ເກດສະໜາ (ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ)</td><td>12. Chip wood</td><td></td><td></td><td></td></tr>
<tr><td colspan="7">ອະທິບາຍຄໍາສັບ ຫຼື ຄວາມໝາຍ: - ໄມ້ເກດສະໜາທີ່ສັບເປັນປ່ຽງນ້ອຍໆ ຫຼື ບົດເປັນຝຸ່ນ (ສໍາລັບໄມ້ປູກ) ແມ່ນໄມ້ເກດສະໜາຈາກສວນປູກທີ່ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ.</td></tr>
</table>

## ຮູບພາບ ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ

### 1 - 44.01 ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ

#### 1.1- 4401.22.00 ຂີ້ເລື່ອຍອັດແທ່ງ





#### 1.2 - 4401.31.00 ຂີ້ເລື່ອຍອັດເມັດ





### 2 - 44.02 – 4402.90.90 ຜະລິດຕະພັນຖ່ານຂາວ, ຖ່ານອັດແທ່ງຈາກຂີ້ເລື່ອຍ.









## 3 - 44.09 – 4402.29.00 ຜະລິດຕະພັນໄມ້ປັກເກ້, ໄມ້ປູພື້ນ ສຳລັບພາຍໃນ

### 3.1 ຜະລິດຕະພັນໄມ້ປັກເກ້

### 3.1.1 ໄມ້ປັກເກ້ເສັ້ນດຽວ


















### 3.1.2 ໄມ້ປັກເກ້ເຊື່ອມຕໍ່ປະສານ




### 3.1.3 ໄມ້ປັກເກ້ໂມເສດ




### 3.2 ຜະລິດຕະພັນໄມ້ປູພື້ນ






## 3.3 - ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ











### 3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ



## 4 - 44.10; 44.11; 44.12 ຜະລິດຕະພັນໄມ້ອັດ

### 4.1 – 44.10; 44.11; 44.12 ໄມ້ອັດຈາກຂີ້ເລື່ອຍ, ຂີ້ກົບ ແລະ ໄມ້ສັບ




### 4.2 & 4.3 - 44.11 – 4411.00.00 ໄມ້ອັດຈາກໄມ້ບົດ ແລະ ໄຍໄມ້




### 4.4 – 44.12 – 4412.99.00 ໄມ້ອັດຈາກໄມ້ປອກ (Veneer)








### 4.5 - 44.12 - 4412.94.00 ໄມ້ອັດບ໊ອກບອດ





4.6 – 44.12 – 4412.94.00 ໄມ້ອັດປະສານ, ໄມ້ອັດຕໍ່ປະສານ






4.7 - 44.12 - 4412.99.00 ໄມ້ອັດປະສານສຳລັບໜ້າໂຕະ








## 5 - 44.14 ເຄື່ອງໃຊ້ສ້ອຍທີ່ເຮັດດ້ວຍໄມ້

### 5.1 - 4414.00.00 ຂອບສຳລັບແຕ້ມຮູບ ,ຂອບຮູບ ,ຂອບແວ່ນ





### 5.2 – 4415.00.00 ຫີບ, ກັບ, ລັງ, ຖັງ ແລະ ສິ່ງຫຸ້ມຫໍ່ຄ້າຍຄຽງ, ແກນມ້ວນສາຍກາບ, ພາເລດທີ່ເຮັດດ້ວຍໄມ້





### 5.2.1 – 4415.10.00 ຫີບ, ຫີບນ້ອຍ, ຫີບໂປ່ງ, ຖັງກົມ



5.2.2 – 4415.20.00 ແຜ່ນຖາດ, ຖາດ-ຫີບ ແລະ ຖາດໃສ່ຂອງອື່ນໆ ທີ່ໃຊ້ສຳລັບຮອງ ແລະ ເຄື່ອນຍ້າຍສິນຄ້າ



5.3 – 5.3.1 & 5.3.2 – 44.16 – 4416.00.10 & 4416.00.90 ອ່າງ, ຖັງເຮັດດ້ວຍໄມ້



5.4 – 5.4.1 - 44.17 - 4417.00.90 - 4417.00.10 ດ້າມເຄື່ອງມືທີ່ເຮັດດ້ວຍໄມ້



### 5.4.2 ຮູບຫຸ່ນເກີບບູດ, ກົ້ນເກີບ













## 6 - 44.18 ຜະລິດຕະພັນໄມ້ປະກອບໃນອາຄານ

### 6.1 - 418.10.00 ຊຸດປ່ອງຢ້ຽມ





### 6.2 - 4418.20.00 ຊຸດປະຕູ





ແບບທີ2: ອີງກົບໄມ້ອັດປະສານ





### 6.2.3 ບານຕູ້ເຮືອນຄົວ



### 6.4418 - 3.50. 00ແຜ່ນໄມ້ມຸ້ງຫຼັງຄາ






### 6.4 – 4418.50.00 ແຜ່ນໄມ້ຮົ້ວ






## 6.5 - 4418.71.00 ແຜ່ນໄມ້ປະກອບແບບລາຍໂມເສດ





## 6.6 – 4418.72.00 ຜະລິດຕະພັນໄມ້ຂອບອັດເປັນຊັ້ນ






## 6.7 – 6.7.1- 6.7.2 - 4418.72.00 ຊຸດຂັ້ນໄດ






## 7 - ເຄື່ອງຫັດຖະກໍາ ທີ່ເຮັດດ້ວຍໄມ້

### 7.1 ຜະລິດຕະພັນໄມ້ທີ່ໃຊ້ເທິງໂຕະອາຫານ







### 7.2 - ຂຽງ





### 7.3 - 44.20 - 4420.10.00 - ຜະລິດຕະພັນເຄື່ອງຫັດຖະກຳໄມ້






### 7.4 - 44.21 - 4421.10.00 - ຜະລິດຕະພັນຂໍເກາະເສື້ອ





### 7.5 – 4421.90.10 - ຜະລິດຕະພັນແກ່ນ, ຫຼອດ, ກະສວຍ, ຫຼອດດ້າຍຫຍິບຜ້າ





### 7.6 & 7.7- 4421.90.20 & 4421.90.94 - ໄມ້ຂີດໄຟ, ໄມ້ຈີ້ມແຂ້ວ





### 7.8 - 4421.90.99 - ລູກປັດສຳລັບນັກບວດ, ໄມ້ກ້ານສໍ







### 7.9 - ເຄື່ອງດົນຕີທີ່ເຮັດດ້ວຍໄມ້





## 8 - 94.01 - ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້

### 8.1 - 9401.61.00 - ສະໂລງໄມ້, ສະໂລງໄມ້ຫຸ້ມເບາະທຸກຊະນິດສຳເລັດຮູບ.



**8.2 - 9401.61.00 - ຕັ່ງໄມ້, ຕັ່ງໄມ້ຫຸ້ມເບາະ ທຸກຊະນິດສຳເລັດຮູບ**



## 8.3 – 94.03 – 9403.60.10 - ໂຕະໄມ້ທຸກຊະນິດສຳເລັດຮູບ










## 8.4 – 9403.60.10 - ຕູ້ໄມ້ທຸກຊະນິດສຳເລັດຮູບ





8. 5- 9403.60.10 - ຕຽງ ໄມ້ທຸກຊະນິດສໍາເລັດຮູບ





8.6 – 9403.00.00 - ເຄື່ອງຕົບແຕ່ງອື່ນໆ ທີ່ເປັນເຟີນີເຈີ ດ້ວຍໄມ້

8.6.1 - 9403.30.00 - ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງການ





8.6.2 - 9403.40.00 - ເຄື່ອງເຟີນີເຈີທີ່ໃຊ້ໃນເຮືອນຄົວ







8.6.3 - 9403.50.00 - ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງນອນ






9 - 94.03 - 9403.81.00 - ຜະລິດຕະພັນ ທີ່ເຮັດດ້ວຍໄມ້ໄຜ່ ແລະ ຫວາຍ

9.1 - ຜະລິດຕະພັນໄມ້ໄຜ່






9.1.3 - ໄມ້ປ່ອງ ແລະ ຜະລິດຕະພັນໄມ້ປ່ອງ





### 9.2 - ຜະລິດຕະພັນຫວາຍ



### 10 - ໄມ້ປູກສຳລັບເຮັດໄມ້ຄ້ຳແບບ, ຮົ້ວ, ຂ້າວທີ່ເປັນລຳຕົ້ນ (ໄມ້ກົມ) ມີເສັ້ນຜ່າກາງນ້ອຍກ່ວາ ຫຼື ເທົ່າກັບ 12 ຊມ ລົງມາ



11 - ຜະລິດຕະພັນເຫຍື້ອໄມ້ຈາກໄມ້ປູກ








12 - ໄມ້ເກດສະໜາ (ບົດເປັນຝຸ່ນ ຫຼື ສັບເປັນປ່ຽງນ້ອຍໆ)



# ລາຍການ (ບັນຊີ) ຜະລິດຕະພັນໄມ້ ທີ່ຫ້າມສົ່ງອອກ



# ສາລະບານ


ໜ້າ

**ລາຍການ (ບັນຊີ) ຜະລິດຕະພັນໄມ້ທີ່ຫ້າມສົ່ງອອກ**

1. ຜະລິດຕະພັນໄມ້ເລື່ອຍ ..... 1
2. ຜະລິດຕະພັນໄມ້ເລື່ອຍ ແລະ ຄານອັດປະສານ ..... 1
3. ຜະລິດຕະພັນໄມ້ໂຕະ, ຕັ່ງທີ່ເປັນໜ້າໄມ້ທຳມະຊາດແຜ່ນດຽວທີ່ມີຂະໜາດໃຫຍ່ ..... 1
4. ຜະລິດຕະພັນຊຽງທີ່ມີຂະໜາດໃຫຍ່ ..... 1
5. ໄມ້ປູກທີ່ເປັນລຳຕົ້ນ (ໄມ້ກົມ) ຂະໜາດໃຫຍ່ (ເສັ້ນຜ່າໃຈກາງໃຫ່ຍກ່ວາ 12 ຊັງຕີແມັດ ຂຶ້ນໄປ) ..... 1
6. ຖ່ານດຳທຸກຊະນິດ ..... 1
7. ໄມ້ປູພື້ນສຳລັບພາຍນອກ ..... 1
8. ໄມ້ບົວ ..... 1
9. ໄມ້ປະກອບຖັງລົດ ..... 1
10. ໂລງສົບ ..... 1
11. ລູກຕິ່ງ ..... 1
12. ຮາວພະນັກ, ຮາວພະນັກອັດເຊື່ອມຕໍ່ປະສານ ..... 1

**ຮູບພາບລາຍການ (ບັນຊີ) ຜະລິດຕະພັນໄມ້ທີ່ຫ້າມສົ່ງອອກ** ..... 2

1. ຜະລິດຕະພັນໄມ້ເລື່ອຍ ..... 2
2. ຜະລິດຕະພັນໄມ້ເລື່ອຍ ແລະ ຄານອັດປະສານ ..... 3
3. ຜະລິດຕະພັນໄມ້ໂຕະ, ຕັ່ງທີ່ເປັນໜ້າໄມ້ທຳມະຊາດແຜ່ນດຽວທີ່ມີຂະໜາດໃຫຍ່ ..... 4
4. ຜະລິດຕະພັນໄມ້ຊຽງທີ່ມີຂະໜາດໃຫ່ຍ ..... 4
5. ໄມ້ປູກທີ່ເປັນລຳຕົ້ນ (ໄມ້ກົມ) ຂະໜາດໃຫຍ່ (ເສັ້ນຜ່າໃຈກາງໃຫ່ຍກ່ວາ 12 ຊັງຕີແມັດ ຂຶ້ນໄປ) ..... 5
6. ຖ່ານດຳທຸກຊະນິດ ..... 5
7. ໄມ້ປູພື້ນສຳລັບພາຍນອກ ..... 6
8. ໄມ້ບົວ ..... 6
9. ໄມ້ປະກອບຖັງລົດ ..... 7
10. ໂລງສົບ ..... 7
11. ລູກຕິ່ງ ..... 8
12. ຮາວພະນັກ, ຮາວພະນັກອັດເຊື່ອມຕໍ່ປະສານ ..... 8

# ລາຍການ (ບັນຊີ) ຜະລິດຕະພັນໄມ້ທີ່ຫ້າມສົ່ງອອກ.

| ລະຫັດເລົ້າ Heading | ລະຫັດຍອຍ Sub-Heading | ລາຍການຜະລິດຕະພັນໄມ້ "Wooden products or Wooden finish-products" | | ຂະໜາດບໍ່ກາຍ (ຊມ) Maximum size (Cm) | | |
|---|---|---|---|---|---|---|
| | | ພາສາລາວ 'Lao' | ພາສາອັງກິດ 'English' | ໜາ Thick | ກ້ວາງ Wide | ຍາວ Length |
| | | 1. ຜະລິດຕະພັນໄມ້ເສົາໂຊ | 1. Column | | | |
| | | 2. ຜະລິດຕະພັນໄມ້ເສົາ ແລະ ຄານອັດປະສານ | 2. Column and Laminated Beams | | | |
| | | 3. ຜະລິດຕະພັນໄມ້ໂຕະ, ຕັ່ງທີ່ເປັນໜ້າໄມ້ທຳມະຊາດແຜ່ນດຽວທີ່ມີຂະໜາດໃຫຍ່ | 3. large Tables, Chairs make from a piece of timber | | | |
| | | 4. ຜະລິດຕະພັນຂຽງທີ່ມີຂະໜາດໃຫຍ່ | 4. Cutting boards have a large size | | | |
| | | 5. ໄມ້ປູກທີ່ເປັນລຳຕົ້ນ (ໄມ້ກົມ) ຂະໜາດໃຫຍ່ (ເສັ້ນຜ່າໃຈກາງໃຫ່ຍກ່ວາ 12 ຊັງຕີແມັດ ຂຶ້ນໄປ) | 5. Planted Woods have a large size | | | |
| | | 6. ຖ່ານດຳທຸກຊະນິດ | 6. Other Black Charcoals | | | |
| | | 7. ໄມ້ປູພື້ນສຳລັບພາຍນອກ | 7. S2S; S4S E4E Decking, | | | |
| | | 8. ໄມ້ບົວ | 8. Mounded Timber Products | | | |
| | | 9. ໄມ້ປະກອບຖັງລົດ | 9. Truck body joinery | | | |
| | | 10. ໂລງສົບ | 10. Coffin | | | |
| | | 11. ລູກຕົ່ງ | 11. Balustrades | | | |
| | | 12. ຮາວພະນັກ, ຮາວພະນັກອັດເຊື່ອມຕໍ່ປະສານ | 12. Stair rail, Laminated stair rail | | | |

**ໝາຍເຫດ**: ລາຍການໄມ້ ແລະ ຜະລິດຕະພັນໄມ້ທຸກປະເພດ ທີ່ບໍ່ໄດ້ບັນຈຸໃນລາຍການ (ບັນຊີ) ຜະລິດຕະພັນໄມ້ເພື່ອສົ່ງອອກ ແມ່ນບໍ່ອະນຸຍາດໃຫ້ສົ່ງອອກ.

# ຮູບພາບລາຍການ (ບັນຊີ) ຜະລິດຕະພັນໄມ້ທີ່ຫ້າມສົ່ງອອກ.

1. ຜະລິດຕະພັນໄມ້ເສົາໂຊ






## 2. ຜະລິດຕະພັນໄມ້ເສົາ ແລະ ຄານອັດປະສານ










3. ຜະລິດຕະພັນໄມ້ໂຕະ, ຕັ່ງທີ່ເປັນໜ້າໄມ້ທຳມະຊາດແຜ່ນດຽວທີ່ມີຂະໜາດໃຫຍ່




4. ຜະລິດຕະພັນໄມ້ຊຽງທີ່ມີຂະໜາດໃຫ່ຍ





5. ໄມ້ປູກທີ່ເປັນລຳຕົ້ນ (ໄມ້ກົມ) ຂະໜາດໃຫຍ່ (ເສັ້ນຜ່າໃຈກາງໃຫ່ຍກ່ວາ 12 ຊັງຕີແມັດ ຂຶ້ນໄປ)





6. ຖ່ານດຳທຸກຊະນິດ



7. ໄມ້ປູພື້ນສຳລັບພາຍນອກ



8. ໄມ້ບົວ



9. ໄມ້ປະກອບຖັງລົດ




10. ໂລງສົບ



11. ລູກຕິ່ງ



12. ຮາວພະນັກ, ຮາວພະນັກຮັດເຊື່ອມຕໍ່ປະສານ

